//

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

------------000000-------------

ບໍລິສັດ ອີທີແອລ ມະຫາຊົນ

ພະແນກ ບໍລິຫານ

ວັນທີ 08 MAY 2013

# ບົດສະຫຼຸບ

ແຜນວຽກປະຈໍາອາທິດ ແລະ ທິດທາງແຜນການປະຕິບັດວຽກອາທິດຕໍ່ໄປ ຂອງພະແນກ ບໍລິຫານ

## I. <u>ວຽກທີ່ປະຕິບັດໃນອາທິດຜ່ານມາ</u>:

<u>ວຽກຫ້ອງການ</u>:

- ແກ້ໄຂເອກະສານປະຈໍາວັນ, ເອກະສານເບີກຈ່າຍ, ຂໍ້ຕົກລົງ.
- ຈັດຫ້ອງປະຊຸມ, ເພື່ອອໍານວຍຄວາມສະດວກໃຫ້ແກ່ການປະຊຸມ.
- ຈັດສິ່ງເຄື່ອງ ຫຼື ອຸປະກອນຕ່າງໆໃຫ້ບັນດາ ສາຂາແຂວງ ອທອຈໍານວນ 5ຄັ້ງ.
- ໄດ້ລົງຕິດຕາມຄະດີຄົນຮ້າຍລັກຕັດສາຍກາບຢູ່ຫຼັກ 21, ທ່າເດື່ອ ແລະ ໄດ້ສົມທົບກັບຄະນະປ້ອງກັນ ອທອ ແລະ ພະແນກ ທີ່ກ່ຽວຂ້ອງລົງໄປເຮັດບົດບັນທຶກກັບອໍານາດການປົກຄອງບ້ານໂຄກສະອາດເພື່ອຈະໃຫ້ລາງວັນໃນການດັກຈັບຄົນຮ້າຍ.
- ໄດ້ສໍາເລັດການອອກແຮງງານລວມສົມທົບກັບສະຫະພັນກໍາມະບານຂອງ ອທອ ຕ້ອນຮັບວັນກໍາມະກອນໂລກຢູ່ ອທອ ສູນກາງໃນວັນທີ 02/05/2013.

<u>ວຽກງານຄຸ້ມຄອງຊັບສິນ</u>:

- ຕິດຕາມໃສ່ລະຫັດຊັບສິນເກີດຂຶ້ນໃໝ່ໃນເດືອນ.
- ເບີກຈ່າຍປະຈໍາວັນບັດ, ເຄື່ອງສົ່ງເສີມການຂາຍ, ອຸປະກອນຕິດຕັ້ງ.
- ຮັບສິນຄ້າເຂົ້າສາງ(ບັດເຕີມເງິນ) ວັນທີ 04/05/2013.
- ແຈ້ງຄວາມ ຄົນລັກຕັດສາຍກາບໂທລະສັບ.
- ຢື່ນເອກະສານ ຂໍເອົານໍ້າປາປາເຂົ້າຫ້ອງການຫຼັກ 21.
- ເອົາຂໍ້ມູນເບີກຈ່າຍສິນຄ້າໃນແຕ່ລະວັນໃຫ້ຄະນະກວດສອບ.
- ຂຶ້ນແຜນຄ່າໃຊ້ຈ່າຍສ້ອມແປງ BTS ພາຍໃນນະຄອນຫຼວງວຽງຈັນຈໍານວນ 11 ສະຖານີ.
- ສໍາຫຼວດລາຍລະອຽດເພື່ອອອກແບບຕໍ່ເຕີມຫ້ອງການຢູ່ສາຂາ ອທອ ແຂວງ ຫຼວງພະບາງ.
- ສໍາເລັດການກວດກາການກໍ່ສ້າງສູນບໍລິການເມືອງປາກລາຍ.
- ການກໍ່ສ້າງຫ້ອງການ ສາຂາ ອທອ ແຂວງຫຼວງນໍ້າທາ ສໍາເລັດ 100% ມອບໃຫ້ແຂວງເປັນຜູ້ກວດ.
- ການກໍ່ສ້າງສູນບໍລິການເມືອງສິງ ສໍາເລັດ 100% ມອບໃຫ້ແຂວງເປັນຜູ້ກວດກາ.
- ວຽກກໍ່ສ້າງຢູ່ເມືອງດາກຈຶງ ມອບໃຫ້ສາຂາ ແຂວງ ເຊກອງເປັນຜູ້ກວດ.

<u>ວຽກງານຄຸ້ມຄອງພາຫະນະ</u>:

- ຈັດພາຫະນະຮັບໃຊ້ວຽກ ຕາມການສະເໜີຂອງ ແຕ່ລະພະແນກການ.
- ເບີກຈ່າຍ ແລະ ຄຸ້ມຄ້ອງນໍ້າມັນເຊື້ອໄຟ ແລະ ບໍາລຸງຮັກສາ ພາຫະນະທີ່ເປ່ເພ.

<u>ວຽກງານຈັດຊື້:</u>

- ການຈັດຊື້ Payment Gateway System ແມ່ນຕໍ່ລອງລາຄາແລ້ວ. ຢູ່ໃນຂັ້ນຕອນເຮັດສັນຍາ (ເຄື່ອງມາຮອດສະໜາມບິວແລ້ວ).
- ການສ້ອມແປງອຸປະກອນວັດແທກ VSAT ແລະ STD-A ແມ່ນຕໍ່ລອງລາຄາແລ້ວ ຢູ່ໃນຂັ້ນຕອນລາຍງານຜົນການຕໍ່ລອງ.
- ການຈັດຊື້ ອຸປະກອນແຍກ Cell BTS : Optic Module ແມ່ນຢູ່ໃນຂັ້ນຕອນເຈລະຈາເງື່ອນການສົ່ງເຄື່ອງ, ການຖ່າໂອນ ເງິນຂ້າມປະເທດຜ່ານທະນາຄານ ແລະ ຄ່າເຄຍເອກະສານນຳເຂົ້າປະເທດ ກັບບໍລິສັດ Ad-net. Inveter AD/DC ແມ່ນຢູ່ໃນຂັ້ນຕອນຄົ້ນຄ້ວາປຶກສາຫາລືເລືອກເອົາບໍລິສັດທີ່ມີສະເປັກເຕັກນິກຖືກຕ້ອງ, ລາຄາຕໍ່າກ່ວາໝູ່ແລ້ວລາຍ ງານຫາ ຄະນະກວດກາ ເພື່ອຂໍອະນຸມັດຕໍ່ລອງລາຄາ ແລະ ຈັດຊື້ເຄື່ອງດັ່ງກ່າວ.
- ການຄົ້ນຄ້ວາເຮັດ Optimization ຂອງບໍລິສັດ Verteg ເພື່ອແກ້ໄຂບັນຫາຄື້ນຄ້ວາມຖີ່ລົບກວນ WCDMA 850 ຂອງ DTAC ແມ່ນຢູ່ໃນຂັ້ນຕອນຂໍລາຍຊື່ແຕ່ງຕັ້ງຄະນະຮັບຜິດຊອບ.
- ການຈັດຊື້ ອຸປະກອນເພີ່ມລະບົບສູນກາງ Core network ໂທລະສັບມືຖື ແມ່ນຢູ່ໃນຂັ້ນຕອນຂໍລາຍຊື່ແຕ່ງຕັ້ງຄະນະຮັບຜິດຊອບ.
- ການຈັດຊື້ ອຸປະກອນລະບົບສາຍສົ່ງ DWDM ແລະ ຂະຫຍາຍເພີ່ມລະບົບຮັບ-ສົ່ງຂໍ້ມູນ ແມ່ນຢູ່ໃນຂັ້ນຕອນຂໍລາຍຊື່ແຕ່ງຕັ້ງຄະນະຮັບຜິດຊອບ.

<u>ວຽກກໍ່ສ້າງຕິດຕັ້ງ:</u>

- ການກໍ່ສ້າງ ແລະ ຕິດຕັ້ງໄຟຟ້າ ຢູ່ແຂວງຜົ້ງສາລີ ຈຳນວນ 10 ສະຖານີ, ຕໍ່ລອງລາຄາແລ້ວ. ຢູ່ໃນຂັ້ນຕອນເຮັດສັນຍາ (ແຂວງເຮັດສັນຍາເອງ, ໃບສະເໜີ ສະບັບເລກທີ: 579/ອທອ.ຜລ, ລົງວັນທີ: 04/07/2012).
- ການຕິດຕັ້ງໄຟຟ້າເຂົ້າສະຖານີ BTS ບ້ານ ບໍ່ເຫຼັກ ແລະ ບ້ານ ແອນ ແຂວງ ຫົວພັນ ແມ່ນຢູ່ໃນຂັ້ນຕອນລໍຖ້າເປີດຊອງແລ້ວ ຢູ່ໃນຂັ້ນຕອນຕໍ່ລອງລາຄາ (ມອບໃຫ້ ອທອ ສາຂາ ແຂວງ ທາບທາມລາຄາຢູ່ແຂວງເລີຍ) (ໃບສະເໜີ ສະບັບ ເລກທີ: 0176/ພພທ.ອທອ, ລົງວັນທີ: 30/04/2013).
- ການປັບປຸງ, ບຳລຸງຮັກສາ, ສ້ອມແປງ ແລະ ຕິດຕັ້ງສາຍໃຍແກ້ວຢູ່ພາກກາງ ແລະ ພາກໃຕ້ ແມ່ນຢູ່ໃນຂັ້ນຕອນຂໍລາຍຊື່ແຕ່ງຕັ້ງຄະນະຮັບຜິດຊອບ.
- ການກໍ່ສ້າງ-ຕິດຕັ້ງໄຟຟ້າ ຢູ່ແຂວງ ອັດຕະປື ຈຳນວນ 07 ສະຖານີ ແມ່ນມອບໃຫ້ ອທອ ສາຂາ ແຂວງ ທາບທາມລາຄາຢູ່ແຂວງເລີຍ. ຢູ່ໃນຂັ້ນຕອນເຮັດສັນຍາ (ໃບສະເໜີ ສະບັບເລກທີ: 067/ອປ.ອທອ, ລົງວັນທີ: 05/02/2013).
- ການກໍໍ່ສ້າງ-ຕິດຕັ້ງຕາຂ່າຍໄຟຟ້າເຂົ້າສະຖານີ Repeater ຢູ່ແຂວງ ຊຽງຂວາງຈຳນວນ 15 ສະຖານີ ແມ່ນມອບໃຫ້ ອທອ ສາຂາ ແຂວງ ທາບທາມລາຄາຢູ່ແຂວງເລີຍ. ຢູ່ໃນຂັ້ນຕອນໃຫ້ແຂວງທາບທາມລາຄາ (ໃບສະເໜີ ສະບັບ ເລກທີ: 0173/ພພທ.ອທອ, ລົງວັນທີ: 29/04/2013).
- ການກໍ່ສ້າງສະຖານີ BTS ຢູ່ເຂື່ອນໄຟຟ້ານ້ຳອູ 5 ແລະ ສະຖານີ ພູຊ່າງ, ແຂວງຜົ້ງສາລີ, ຕໍ່ລອງລາຄາແລ້ວ. ຢູ່ໃນຂັ້ນຕອນເຮັດສັນຍາ (ແຂວງເຮັດສັນຍາເອງ, ໃບສະເໜີ ສະບັບເລກທີ: 579/ອທອ.ຜລ, ລົງວັນທີ: 04/07/2012).

<u>ວຽກນຳເຂົ້າ:</u>

- ໄດ້ນຳເຂົ້າບັດຕື່ມເງິນຂອງບໍລິສັດ Blue fish ຈຳນວນ 20 ລ້ານບັດ.

## <u>*ແຜນວຽກອາທິດຕໍ່ໄປ:*</u>

- ສືບຕໍ່ ເລື່ອງຄົນຮ້າຍລັກຕັດສາຍຢູ່ໃນນະຄອນຫຼວງ, ທາງພະແນກ ບໍລິຫານ ຈະໄດ້ລົງສົມທົບກັບອຳນາດການປົກຄອງບ້ານຕາມແຕ່ລະທ້ອງຖິ່ນຕື່ມອີກ.
- ສືບຕໍ່ ຈັດພິທີມອບເຄື່ອງອຸປະຖຳ, ເງິນອຸປະຖຳໃຫ້ແກ່ພາກສ່ວນພາຍນອກ.

- ສືບຕໍ່ໃສ່ລະຫັດຊັບສິນທີ່ເກີດຂຶ້ນໃໝ່ ແລະ ສືບຕໍ່ຮັບເຂົ້າ-ຈ່າຍອອກ ບັດ, ຊິມ, ເຄື່ອງສົ່ງເສີມການຂາຍ.
- ສ້ອມແປງ BTS ພາຍໃນນະຄອນຫຼວງຈຳນວນ 11 ສະຖານີ.
- ສືບຕໍ່ຕິດຕາມວຽກກໍ່ສ້າງທີ່ຍັງບໍ່ທັນສຳເລັດ 100% ຢູ່ ແຂວງ ຊຽງຂວາງ ແລະ ວຽກເພີ່ມຢູ່ແຂວງ ອັດຕະປື (ວຽກເທເດີ່ນ).
- ຕິດຕາມເບິ່ງເອກະສານສະເໜີເອົານ້ຳປະປາເຂົ້າຫ້ອງການຫຼັກ 21.
- ການຕິດຕັ້ງກ້ອງວົງຈອນປິດເພີ່ມ ໃສ່ໜ້າປະຕູາງເຂົ້າຫ້ອງເຄື່ອງຊັ້ນ 3 (ຊັ້ນ 3, ຕຶກເກົ່າ ອາຄານ 4 ຊັ້ນ) ແລະ ຈັດຊື້ຈໍໂທລະພາບສຳລັບຕິດຕາມກ້ອງວົງຈອນປິດ ຢູ່ປ້ອມຍາມ 1 ໜ່ວຍ ແລະ ຢູ່ສູນກາງໂທລະສັບ ຈຳນວນ 2 ໜ່ວຍ ພ້ອມອຸປະກອນຕິດຕັ້ງ ແມ່ນຢູ່ໃນຂັ້ນຕອນຄົ້ນຄ້ວາ ແລະ ປຶກສາຫາລື.
- ສືບຕໍ່ການຮ່ວມມືຂະຫຍາຍເຄືອຂ່າຍ FTTX, Wireless Internet ແລະ FIWI Internet ແມ່ນຢູ່ໃນຂັ້ນຕອນລໍຖ້າ ບໍລິສັດ ສິງລາວ, ບໍລິສັດ ລາວໝັ້ນຄົງ ແລະ ບໍລິສັດ Wiltelcom ສັງລວມ ແລະ ສົ່ງຂໍ້ມູນທັງໝົດໃນການຮັບຜິດ ຊອບໃນການລົງທຶນ, ການບຳລຸງຮັກສາ ແລະ ແບ່ງປັນລາຍຮັບ ຂອງທັງສອງຝ່າຍໃນການຮ່ວມທຶນ.
- ສືບຕໍ່ ການຈັດຊື້ MCPA 150W ຈຳນວນ 30 ຊຸດ ແມ່ນເຮັດສັນຍາແລ້ວ.
- ສືບຕໍ່ ການຈັດຊື້ Telephony ຍີ່ຫໍ້ ICOM ຈຳນວນ 02 ຄູ່ ແມ່ນຢູ່ໃນຂັ້ນຕອນລວມຄະນະຄົ້ນຄວ້າ ແລະ ປຶກ ສາຫາລື.
- ສືບຕໍ່ ການຈັດຊື້ ອຸປະກອນຮັບ-ສົ່ງສັນຍານ 3G NodeB ແລະ 2G NodeB ຈຳນວນ 30 ຊຸດ ແມ່ນເຮັດສັນຍາແລ້ວ ລໍຖ້າເຄື່ອງມາ.
- ສືບຕໍ່ ການຈັດຊື້ ອຸປະກອນຮັບ-ສົ່ງສັນຍານ 3G NodeB ແລະ 2G NodeB ຈຳນວນ 100 ຊຸດ ແມ່ນ ຢູ່ ໃນ ຂັ້ນຕອນມອບໃຫ້ພະແນກ ໂທລະສັບມືຖື, ພພທ ແລະ ໄອຊີທີ ຄົ້ນຄ້ວາດ້ານສະເປັກເຕັກນິກ.
- ສືບຕໍ່ ການຈັດຊື້ ແຜ່ນ Broad ເຄື່ອງ BTS & BSC ASB ແມ່ນຢູ່ໃນຂັ້ນຕອນຂໍລາຄາກັບບໍລິສັດ Alcatel Shnghi bell.
- ສືບຕໍ່ການຈັດຊື້ ອຸປະກອນບຳລຸງຮັກສາໄຟຟ້າ-ແອເຢັນ(ຢູ່ໃນຂັ້ນຕອນເຮັດຂໍ້ຕົກລົງ).
- ສືບຕໍ່ການຈັດຊື້ ພາຫະນະຮັບໃຊ້ສຳລັບປີ 2013 (ຢູ່ໃນຂັ້ນຕອນການສົມທຽບລາຄາ).

## II. <u>ວຽກຕາມບົດບັນທຶກສ່ອງແສ່ງ:</u>

## III. <u>ວຽກຄ້າງ:</u>

## IV. <u>ຂໍ້ສະເໜີ:</u>

- ສະເໜີໃຫ້ພະແນກການທີ່ກ່ຽວຂ້ອງ ຫຼື ພະແນກ ທີ່ພົວພັນກັບບໍລິສັດຜະລິດບັດໃຫ້ເຂົາເຈົ້າເຮັດເລກໝາຍແກັດໃຫ້ລະອຽດຕື່ມ, ເນື່ອງຈາກວ່າ ບັດທີ່ເຂົ້າມາງວດນີ້ມີເລກໝາຍແກັດຊ້ຳກັນເຮັດໃຫ້ຫຍຸ້ງຍາກໃນການຈັດແກັດບັດ.
- ທາງພະແນກ ບໍລິຫານໄດ້ສົມທົບກັບ ພະແນກ ການເງິນ, ພະແນກ ໂທລະສັບຕັ້ງໂຕະແລະອິນເຕີເນັດ, ພະແນກ ການຕະຫຼາດ, ພະແນກ ສາຍສົ່ງ ຈະໄດ້ຄົ້ນຄວ້າປັບປຸງສະຖານທີ່ຫ້ອງການເຮັດວຽກຄືນໃໝ່ຢູ່ຕຶກເຕັກນິກ 04ຊັ້ນ.
- ທາງພະແນກ ບໍລິຫານຈະໄດ້ສົມທົບກັບພະແນກທີ່ກ່ຽວຂ້ອງໃນການຂັ້ນຫ້ອງເພື່ອເອົາໄວ້ເປັນຫ້ອງເກັບກຳຂໍ້ມູນລູກຄ້າທີ່ມາໃຊ້ບໍລິການ(Data Center) ຢູ່ຕຶກເຕັກນິກ ຊັ້ນ 02 ຂອງຕຶກ04 ຊັ້ນ.

ຮ. ຫົວໜ້າພະແນກ ບໍລິຫານ

ບຸນມີ ສຸພັນນະວົງ